# ສູ້ການພິພາກສາດ້ວຍຄວາມໝັ້ນໃຈ

**ຜູ້ພິພາກສາແມ່ນຢູ່ຂ້າງເຮົາ.**

ຊາຍຄົນໜຶ່ງສູງ 5 ຟຸດ 4 ນິ້ວ (ປະມານ 163 ຊັງຕີແມັດ) ລາວມັກປັກດອກຄາເນຊັ່ນໃສ່ເສື້ອຂອງລາວ. ລາວເປັນນາຍົກເທດສະມົນຕີຂອງເມືອງນິວຢອກໃນຊ່ວງລະຫວ່າງເສດຖະກິດຂອງທຸກປະເທດໃນທົ່ວໂລກຖົດຖອຍ ປະຊາຊົນເມືອງນິວຢອກຊື່ນຊົມລາວຫລາຍແລະຕັ້ງຊື່ໃຫ້ລາວວ່າ "ດອກໄມ້ນ້ອຍ" (The Little Flower) ຊື່ແທ້ຂອງດອກໄມ້ນ້ອຍນີ້ແມ່ນ ຟິໂອເຣວໂລ ລາກົວເດຍ (Fiorello LaGuardia). ປະຊາຊົນເມືອງນິວຢອກຮັກລາວເພາະວ່າລາວມີຄວາມຮັກເຫັນອົກເຫັນໃຈແລະເປັນຫ່ວງຕໍ່ປະຊາຊົນ. ເວລາມີເຫດໄຟໄໝ້ລາວຈະຂຶ້ນລົດໄປກັບພະນັກງານດັບເພີງເພື່ອໄປດັບໄຟເປັນປະຈຳ ແລະລາວກໍຊ່ອຍຕຳຫລວດໄປລະງັບເຫດການຮ້າຍທີ່ເກີດທີ່ບາເປັນປະຈຳ. ລາວຮັກເດັກນ້ອຍຫລາຍແລະມີຫລາຍເທື່ອທີ່ລາວພາເດັກນ້ອຍທັງສູນລ້ຽງເດັກກຳພ້າໄປເບິ່ງງານແຂ່ງຂັນກິລາ.

ຄືນໜຶ່ງ ຟິໂອເຣວໂລ ລາກົວເດຍ ໄດ້ໄປທີ່ສານໜຶ່ງໃນຊຸມຊົນທີ່ທຸກຍາກທີ່ສຸດໃນເມືອງນິວຢອກ. ລາວໄດ້ບອກຜູ້ພິພາກສາວ່າໃນຄືນນັ້ນລາວຈະເປັນຜູ້ພິພາກສາເອງ. ບໍ່ພໍເທົ່າໃດນາທີເຂົາໄດ້ນຳຍິງອາຍຸສູງຄົນໜຶ່ງໃສ່ເສື້ອຜ້າເກົ່າໆ ເຂົາໄດ້ຟ້ອງຍິງນີ້ວ່າລາວໄດ້ຂະໂມຍເຂົ້າຈີ່ 1 ແຜ່ນ. ຍິງນັ້ນໄດ້ຍອມຮັບຕໍ່ ຟິໂອເຣວໂລ ລາກົວເດຍ ວ່າລາວຂະໂມຍເຂົ້າຈີ່ 1 ແຜ່ນແທ້ ແລະເຫດຜົນທີ່ລາວຂະໂມຍກໍເພາະວ່າລູກສາວຄົນໜຶ່ງຂອງລາວກຳລັງນອນໄຂ້ຢູ່ ຜົວຂອງລາວໄດ້ໜີຈາກລາວໄປຖິ້ມລູກນ້ອຍສອງຄົນໄວ້ໃຫ້ລາວລ້ຽງ ລູກນ້ອຍສອງຄົນນີ້ກໍບໍ່ມີອາຫານກິນເຊັ່ນກັນ. ຍິງອາຍຸສູງກໍບໍ່ມີເງິນທີ່ຈະຊື້ອາຫານ. ຍ້ອນສະພາບຄວາມຈຳເປັນທາງດ້ານຄອບຄົວ ລາວຈຶ່ງຕ້ອງຂະໂມຍເຂົ້າຈີ່ເພື່ອໄປໃຫ້ຫລານນ້ອຍທີ່ກຳລັງລໍຄອຍອາຫານ. ນາຍົກເທດສະມົນຕີ ຟິໂອເຣວໂລ ລາກົວເດຍຖອນຫາຍໃຈແລະເວົ້າອອກມາວ່າ, "ຂ້ອຍຈຳເປັນຕ້ອງລົງໂທດເຈົ້າ. ກົດໝາຍຄືກົດໝາຍ ບໍ່ມີຂໍ້ຍົກເວັ້ນ. ເຈົ້າຕ້ອງຖືກປັບໄໝ 10 ດໍລ້າ ຖ້າບໍ່ດັ່ງນັ້ນເຈົ້າຕ້ອງຖືກຂັງຄຸກ 10 ມື້." ພໍເວົ້າແລ້ວລາວໄດ້ຈົກເງິນອອກມາຈາກຖົງ 10 ດໍລ້າ ແລ້ວລາວກໍເວົ້າວ່າ "ນີ້ແມ່ນເງິນ 10 ດໍລ້າສຳລັບຄ່າປັບໄໝ ແລະລາວກໍເວົ້າຕໍ່ໄປວ່າ ຂ້ອຍຈະປັບທຸກຄົນໃນສານນີ້ ຄົນລະ 50 ເຊັນ ເພາະວ່າພວກເຈົ້າໄດ້ອາໄສຢູ່ເມືອງດຽວກັນກັບຄົນທີ່ຈຳເປັນຕ້ອງຂະໂມຍເຂົ້າຈີ່ເພື່ອເອົາໄປໃຫ້ຫລານລາວ. ພະ-ນັກງານເກັບເງິນ ເກັບເງິນກັບທຸກຄົນດຽວນີ້ແລ້ວເອົາໄປໃຫ້ຈຳເລີຍດຽວນີ້." ມື້ຕໍ່ມາ ໜັງສືພິມໄດ້ລາຍງານວ່າ ເຂົາໄດ້ມອບເງິນ 47.50 ດໍລ້າໃຫ້ຍິງອາຍຸສູງນັ້ນເພື່ອໄປຊ່ອຍຊື້ອາຫານໃຫ້ຫລາຍລາວ. ໃນຈຳນວນເງິນນັ້ນ 50 ເຊັນກໍແມ່ນໄດ້ມາຈາກເຈົ້າຂອງໂຮງງານເຂົ້າຈີ່ໜ້າເລືອດຜູ້ທີ່ນຳ

ລາວຂຶ້ນສານ! ພີໂອເຣວໂລ ລາກົວເດຍ ໄດ້ຮັບຄຳຊົມເຊີຍຢ່າງຫລວງຫລາຍຈາກປະຊາຊົນ. ຍິງ ຊະລາຄົນນັ້ນຊ່າງໂຊກດີຫລາຍທີ່ລາວໄດ້ຜູ້ຕພິພາກສາທີ່ໃຈດີ ມີຄວາມເມດຕາແລະສະຫລາດ ແມ່ນຜູ້ພິພາກສາແບບນີ້ບໍ່ທີ່ເຮົາຕ້ອງການເມື່ອວັນທີ່ເຮົາຕ້ອງຢືນຢູ່ຕໍ່ໜ້າພະເຈົ້າໃນວັນພິພາກສາ? ພະຄຳພີບອກວ່າເຮົາສາມາດມີຜູ້ພິພາກສາແບບນີ້ ແລະພີ່ນ້ອງທີ່ຮັກອັນນີ້ຊ່າງແມ່ນຂ່າວດີຫລາຍ! ພີ່ນ້ອງຮູ້ບໍ່ວ່າໄດ້ມີໝາຍສານມາຮ້ອງໂຕພີ່ນ້ອງໄປຂຶ້ນສານ?

ພະຄຳພີໄດ້ກ່າວວ່າພວກເຮົາທຸກຄົນມີຄະດີທີ່ຈະຕ້ອງໄດ້ຕັດສິນຕໍ່ໜ້າພະເຈົ້າ ພວກເຮົາທຸກຄົນໄດ້ ຖືກຮຽກໄປໃຫ້ການຕໍ່ສິ່ງຕ່າງໆທີ່ໄດ້ກະທຳ. ຍິງຊາຍທຸກຄົນຈະຕ້ອງຖືກນຳມາຂຶ້ນສານຕໍ່ໜ້າພະ ເຈົ້າ ນີ້ແມ່ນສານສູງທີ່ສຸດໃນຈັກກະວານ

ອັກຄະສາວົກໂປໂລໄດ້ບອກໃຫ້ຮູ້ເຖິງນັດທີ່ຄົນທັງໂລກຈຳເປັນຕ້ອງຮູ້: (ກິດຈະການ 17:31) "ເພາະວ່າພຣະອົງໄດ້ຊົງກຳນົດວັນນຶ່ງໄວ້ ໃນວັນນັ້ນພຣະອົງຈະຊົງພິພາກສາໂລກ" ບໍ່ມີໃຜຖືກລະ ເວັ້ນຈາກການຕັດສິນ ບໍ່ມີໃຜສາມາດໜີພົ້ນຈາກໝາຍສານນີ້ໄດ້

ພະຄຳພີໄດ້ບອກຢ່າງແຈ່ມແຈ້ງວ່າທຸກຄົນຈະຕ້ອງໄດ້ຂຶ້ນສານ (2 ໂກຣິນໂທ 5:10) "ດ້ວຍວ່າ ຈຳເປັນທີ່ເຮົາທຸກຄົນຈະຕ້ອງປາກົດຕົວຕໍ່ຫນ້າບັນລັງພິພາກສາຂອງພຣະຄຣິດ..."

ບໍ່ວ່າເຮົາເຊື່ອຫລືບໍ່ເຊື່ອ ບໍ່ວ່າເຮົາມັກຫລືບໍ່ມັກ ບໍ່ວ່າເຮົາບອກວ່າເຮົາເປັນຄຣິສຕຽນຫລືບໍ່ເປັນ ບໍ່ ວ່າເຮົາເປັນຄົນມີຫລືຄົນຈົນ, ດຳຫລືຂາວ, ເຮົາທຸກຄົນຕ້ອງໄປຂຶ້ນສານ. ພະເຈົ້າບໍ່ເລືອກທີ່ຮັກມັກ ທີ່ຊັງຫລືເຂົ້າຂ້າງຜູ້ໃດຜູ້ໜຶ່ງ. ເມື່ອໃຜຜູ້ໜຶ່ງມີໝາຍສານສະຫວັນມາຮ້ອງ, ຜູ້ນັ້ນຕ້ອງໄປຂຶ້ນສານ.

ເປັນຫຍັງ? ໂປໂລໄດ້ໃຫ້ຄຳຕອບວ່າ: (ໂຣມ 14:12) "ດັ່ງນັ້ນເຮົາທຸກຄົນຈະຕ້ອງກາບທູນເຣື່ອງ ຣາວຂອງຕົນເອງຕໍ່ພຣະເຈົ້າ"

ເມື່ອສານສະຫວັນຕັດສິນແລ້ວ ຊະຕາຊີວິດຂອງເຮົາຈະຕ້ອງເປັນໄປຕາມຄຳຕັດສິນນີ້ຕະຫລອດ ໄປ. ແລະຄຳຕັດສິນນີ້ຈະປ່ຽນແປງບໍ່ໄດ້ ເພາະວ່າບໍ່ມີສານໃດທີ່ສູງກວ່າສານສະຫວັນນີ້ແລ້ວ! ແຕ່ວ່າກ່ອນສານອອກຄຳຕັດສິນ ສານຕ້ອງໄດ້ມີການສືບສວນຫາຄວາມຈິງເສຍກ່ອນ. ໃຫ້ເຮົາມາເບິ່ງໃນພະຄຳພີນຳກັນ ເພື່ອຈະຊອກຮູ້ວ່າສານໃນສະຫວັນເປັນແນວໃດ?

ນັກພະຍາກອນດານີເອນໄດ້ຂຽນວ່າ (ດານີເອນ 7:9,10) "ຂນະທີ່ຂ້າພະເຈົ້າກຳລັງຫລຽວເບິ່ງ ໄດ້ມີບັນລັງຫລາຍອັນຖືກນຳມາຕັ້ງໄວ້ເທິງບັນລັງແຕ່ລະອັນ ມີອົງຜູ້ຊົງພຣະຊົນຢູ່ເປັນນິດປະທັບຢູ່ ເຄື່ອງສລອງຂອງພຣະອົງຂາວເຫມືອນນວນຝ້າຍ ຜົມເຫມືອນຂົນແກະບໍຣິສຸດ ພຣະບັນລັງຂອງ ພຣະອົງເປັນແປວໄຟ ກົງຈັກຂອງບັນລັງນັ້ນເປັນໄຟລຸກຢູ່ ແລະແປວໄຟໄດ້ພຸ່ງອອກຈາກທີ່ນັ້ນ ມີ ຄົນເປັນຈຳນວນລ້ານບົວຣະບັດພຣະອົງຢູ່ທີ່ນັ້ນ ແລະມີຄົນເປັນໂກດໆຢືນຢູ່ຊ້ອງພຣະພັກຂອງ ພຣະອົງ ພວກຜູ້ພິພາກສາກໍເລີ້ມພິພາກສາ ແລະເປີດຫນັງສືອອກມາອ່ານ"

ໃນທີ່ນີ້ດານີເອນໄດ້ບອກໃຫ້ເຫັນພາບຂອງພະເຈົ້າພະບິດານັ່ງເທິງບັນລັງນີລັນທີ່ມີທູດສະຫວັນເປັນ ຈຳນວນນັບບໍ່ຖ້ວນອ້ອມຮອບ. ໃຫ້ເຮົາມາເບິ່ງນຳກັນວ່າຫລັງຈາກນັ້ນດານີເອນໄດ້ເຫັນຫຍັງ:

(ດານີເອນ 7:13) "ລະຫວ່າງ(ທີ່)ເກີດນິມິດນີ້ໃນເວລາກາງຄືນ ຂ້າພະເຈົ້າໄດ້ເຫັນຜູ້ນຶ່ງມີຮູບຮ່າງ ເຫມືອນມະນຸດ ທ່ານໄດ້ເຂົ້າມາໃກ້ໆອ້ອມຮອບດ້ວຍເມກ ແລະໄດ້ເຂົ້າເຝົ້າພຣະຜູ້ຊົງພຣະຊົນຢູ່ ເປັນນິດ"

ພະບຸດຂອງພະເຈົ້າໄດ້ຢືນຢູ່ຕໍ່ພະພັກພະເຈົ້າ ເບິ່ງຄືວ່າສານສະຫວັນເປັນຄ້າຍໆດັ່ງສານໂລກເລີຍ
ມີຜູ້ພິພາກສາ: ພະເຈົ້າ
ມີພະຍານ: ທູດສະຫວັນອົງບໍລິສຸດຜູ້ໄດ້ເຫັນແລະໄດ້ບັນທຶກທຸກຢ່າງທຸກການກະທຳ.
ແລະຢືນຢູ່ຕໍ່ໜ້າບັນລັງແມ່ນພະເຍຊູຜູ້ເປັນທະນາຍຂອງມະນຸດ, ເໝືອນດັ່ງໂຢຮັນໄດ້ຂຽນວ່າ

(1 ໂຢຮັນ 2:1) "...ພວກເຮົາກໍມີທະນາຍຄວາມ ຄືພຣະເຢຊູຄຣິດຜູ້ຊົງທ່ຽງທັມທີ່ສະຖິດຢູ່ກັບ ພຣະບິດາ" ບາງຄົນອາດຈະເວົ້າ "ເບິ່ງຄືວ່າທຸກຄົນຕ້ອງໄປຂຶ້ນສານ ແຕ່ວ່າກໍບໍ່ແມ່ນທຸກຄົນດອກ ທີ່ຕ້ອງຂຶ້ນສານ" ຈະເວົ້າຢ່າງນີ້ກໍຖືກຄືກັນ

ໃຫ້ເຮົາມາເບິ່ງວ່າພະຄຳພີໄດ້ກ່າວກ່ຽວກັບເລື່ອງນີ້ວ່າແນວໃດ; ພະຄຳພີໄດ້ກ່າວວ່າ (ດານີເອນ 7:10) "...ພວກຜູ້ພິພາກສາກໍເລີ້ມພິພາກສາ ແລະເປີດຫນັງສືອອກມາອ່ານ" ໜັງສືນັ້ນໄດ້ບັນ-ທຶກທຸກສິ່ງທຸກຢ່າງທຸກການກະທຳຂອງທຸກຄົນທີ່ໄປຂຶ້ນສານ, ກະສັດໂຊໂລໂມນໄດ້ຂຽນວ່າ: (ປັນ-ຍາຈານ 12:14) "ດ້ວຍວ່າ ພຣະເຈົ້າຈະຊົງເອົາການງານທຸກປະການເຂົ້າສູ່ການພິພາກສາ ພ້ອມ ດ້ວຍສິ່ງເລິກລັບທຸກຢ່າງ ບໍ່ວ່າດີຫລືຊົ່ວ"

(ມາລາກີ 3:16) ມາລາກີໄດ້ເວົ້າເພີ່ມເຕີມວ່າ "ຄັນແລ້ວ ຄົນຢຳເກງພຣະຜູ້ເປັນເຈົ້າກໍເວົ້າຕໍ່ກັນແລະກັນ ພຣະຜູ້ເປັນເຈົ້າກໍຊົງຟັງ ແລະໄດ້ຍິນສິ່ງທີ່ພວກເຂົາເວົ້າຕໍ່ພຣະພັກພຣະອົງ ມີປຶ້ມບັນທຶກຊື່ຜູ້ທີ່ຢຳເກງ ແລະນັບຖືພຣະຜູ້ເປັນເຈົ້າ"

ກະສັດດາວິດຮູ້ກ່ຽວກັບໜັງສືບັນທຶກ ເພາະພະອົງຖາມວ່າ: (ເພງສັຣເສີນ 56:8) "ພຣະອົງຊົງນັບຄວາມເດືອດຮ້ອນຂອງຂ້າພຣະອົງ ຊົງເກັບນ້ຳຕາຂອງຂ້າພຣະອົງໃສ່ຂວດຂອງພຣະອົງໄວ້ ນ້ຳຕານັ້ນບໍ່ຢູ່ໃນບັນຊີຂອງພຣະອົງຫລື?

ແນ່ນອນ ພະເຈົ້າຮູ້ທຸກສິ່ງທຸກຢ່າງກ່ຽວກັບເຮົາ, ເພາະວ່າກະສັດດາວິດໄດ້ຂຽນວ່າ: (ເພງສັຣເສີນ 139:1,3,16) "ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ກວດເບິ່ງຂ້າພຣະອົງແລະຮູ້ຈັກຂ້າພຣະອົງດີ ພຣະອົງຮູ້ຈັກການກະທຳທຸກຢ່າງຂອງຂ້າພຣະອົງ ມື້ທັງຫລາຍທີ່ຂ້າພຣະອົງມີຊີວິດຢູ່ ພຣະອົງຊົງບັນທຶກໄວ້ໝົດແລ້ວກ່ອນທີ່ມື້ເຫລົ່ານີ້ໄດ້ບັງເກີດຂຶ້ນມາ"

ພະເຈົ້າຮູ້ທຸກສິ່ງທຸກຢ່າງກ່ຽວກັບເຮົາ. ພະເຈົ້າບັກທຶກສິ່ງທຸກຢ່າງກ່ຽວກັບເຮົາບໍ່ແມ່ນເພື່ອຜົນປະໂຫຍດຂອງພະອົງ ແຕ່ແມ່ນເພື່ອຜົນປະໂຫຍດຂອງຈັກກະວານ ເພື່ອວ່າຈະໄດ້ມີຫລັກຖານເຖິງຄວາມຮັກແລະຄວາມຍຸດຕິທຳຂອງພະອົງໃນທຸກກໍລະນີ້.

ພະເຈົ້າຊົງຈິງຈັງຕໍ່ທຸກການກະທຳຂອງເຮົາ. ທຸກໆຄົນຕ້ອງຮັບຜິດຊອບຕໍ່ທຸກໆການກະທຳຂອງຕົນເອງ! ນີ້ແມ່ນສິ່ງທີ່ກະສັດໂຊໂລໂມນພະຍາຍາມເວົ້າເມື່ອພະອົງຂຽນວ່າ: (ປັນຍາຈານ 11:9) "ໂອ ເຍົາວະຊົນ ຈົ່ງຍິນດີໃນປະຖົມວັຍຂອງເຈົ້າ ແລະໃຫ້ຈິດໃຈຂອງເຈົ້າກະທຳຕົວເຈົ້າຣ່າເຣີງໃນປະຖົມວັຍຂອງເຈົ້າ ເຈົ້າຈົ່ງດຳເນີນໃນທາງແຫ່ງໃຈຂອງເຈົ້າ ແລະຕາມສາຍຕາຂອງເຈົ້າ ແຕ່ຈົ່ງຮູ້ວ່າເນື່ອງດ້ວຍກິຈການງານທັງປວງເຫລົ່ານີ້ພຣະເຈົ້າຈະຊົງນຳເຈົ້າເຂົ້າມາເຖິງການພິພາກສາ"

ມັດທາຍໄດ້ຂຽນວ່າ: (ມັດທາຍ 12:36,37) "ເຮົາບອກພວກທ່ານວ່າ ຖ້ອຍຄຳເປົ່າໆ ທຸກຄຳທີ່ມະນຸດເວົ້າ ເຂົາຈະຕ້ອງໃຫ້ການເພາະຄຳນັ້ນໃນວັນພິພາກສາ ດ້ວຍເຫດວ່າທີ່ທ່ານຈະພົ້ນໂທດໄດ້ຫລືຈະຕ້ອງຖືກໂທດນັ້ນ ກໍເພາະດ້ວຍຖ້ອຍຄຳຂອງຕົນ"

ໄດ້ມີຄົນຄຳນວນອອກມາວ່າຖ້າເອົາຄຳເວົ້າໂດຍສະເລ່ຍຂອງຄົນໜຶ່ງທີ່ເວົ້າໃນ 1 ອາທິດໄປຂຽນລົງໃນກະດາດແມ່ນໄດ້ 320 ໜ້າ ນີ້ໝາຍຄວາມວ່າ ໃນ 60 ປີ ຖ້າເອົາຄຳເວົ້າຂອງເຮົາໄປຂຽນ

ເປັນໜັງສືແມ່ນໄດ້ໜັງສືໜາປານນັ້ນເຖິງ 3,000 ເຫລັ້ມ. ແລ້ວພີ່ນ້ອງຄິດວ່າໜັງສືເຫລົ່ານີ້ຈະເວົ້າແນວໃດກ່ຽວກັບພີ່ນ້ອງໃນວັນພິພາກສາ?

ແລະຍິ່ງກວ່ານັ້ນຄວາມຄາດໝາຍໃນໃຈທີ່ຢູ່ຫລັງຄຳເວົ້າແລະການກະທຳເຫລົ່ານັ້ນກໍຈະຖືກເປີດ-ເຜີຍອອກມາ: (1 ໂກຣິນໂທ 4:5) "...ພຣະອົງຈະຊົງເປີດເຜີຍຄວາມລັບທີ່ເຊື່ອງໄວ້ໃນຄວາມມືດໃຫ້ແຈ່ມແຈ້ງ ແລະຈະຊົງເຜີຍຄວາມຄາດຫມາຍໃນໃຈມະນຸດດ້ວຍ"

ຈະບໍ່ມີຄຳເວົ້າແລະການກະທຳໃດໆຖືກລຶບອອກຫລືຖືກປົກປິດໃນມື້ນັ້ນ! ມະນຸດສາມາດຕົວະໝູ່ເພື່ອນແລະຄົນໃນຄອບຄົວຂອງເຂົາໄດ້ ແຕ່ວ່າພວກເຂົາບໍ່ສາມາດຕົວະພະເຈົ້າໄດ້.
ພະເຈົ້າຮູ້ຄວາມໃນໃຈຂອງເຂົາ.

ເມື່ອວັນພິພາກສາມາເຖິງ, ພວກເຮົາຈະຕ້ອງຕົກຢູ່ໃນໜຶ່ງໃນສອງສະຖານະພາບນີ້ຄື ຖ້າຫາກວ່າບົດບັນທຶກກ່ຽວກັບການກະທຳຜິດຕ່າງໆຂອງເຮົາໃນອະດີດບໍ່ໄດ້ຖືກປົກປ້ອງໂດຍໂລຫິດຂອງພະເຍຊູ ບົດບັນທຶກກ່ຽວກັບການກະທຳຜິດເຫລົ່ານັ້ນຈະລຸກຂຶ້ນມາປະນາມເຮົາ. ແນ່ນອນ, ອັນທີ່ສ້າງຄວາມແຕກຕ່າງນັ້ນມັນບໍ່ແມ່ນສິ່ງທີ່ເຮົາອ້າງວ່າເປັນແຕ່ແມ່ນສິ່ງທີ່ເຮົາເປັນແລະສິ່ງທີ່ເຮົາກະທຳ.

ພວກເຮົາໄດ້ຖືກບອກວ່າເມື່ອພະເຍຊູສະເດັດມາ, (ມັດທາຍ 16:27) "... ເມື່ອນັ້ນພຣະອົງຈະຊົງປະທານບຳເໜັດໃຫ້ແກ່ທຸກຄົນຕາມການທີ່ເຂົາເຮັດນັ້ນ"

ພີ່ນ້ອງບາງຄົນອາດຈະຖາມວ່າ, "ຖ້າຫາກວ່າເຮົາລອດໂດຍພະຄຸນ, ແລ້ວເປັນຫຍັງເຮົາຈຶ່ງຖືກຕັດສິນຕາມການກະທຳຂອງເຮົາ?" ນີ້ກໍແມ່ນຄຳຖາມທີ່ດີ!

ວ່າງບໍ່ດົນມານີ້ ດຣ. ສາແກ ກູໂບ (Dr. Sakae Kubo) ໄດ້ຂຽນວ່າ: "ຢາກໃຫ້ເຮົາລອງຄິດວ່າຖ້າເຮົາບໍ່ຖືກພິພາກສາຕາມການກະທຳຂອງເຮົາແລ້ວ ເຮົາຈະຖືກພິພາກສາແບບໃດ?
ແລ້ວພະເຈົ້າຈະພິພາກສາເຮົາຕາມຫຍັງ? ຕາມສີຜິວ, ຕາມເຊື້ອຊາດ, ຕາມຊົນຊັ້ນໃນສັງຄົມ, ຕາມການສຶກສາ, ຕາມຮູບຮ່າງ, ຕາມຄວາມສາມາດ, ຕາມກຳລັງວັງຊາ, ຕາມການເປັນສະມາຊິດໂບດ, ຫລືຕາມການທີ່ເຮົາອ້າງວ່າເຊື່ອໃນພະຄຣິດຊັ້ນບໍ? (ອີງມາຈາກໜັງສື Your Summons to Court ໜ້າທີ 20)

ຄຣິດສຕຽນທີ່ເຮັດດີເພາະຫວັງຜົນດີຕອບແທນ ການກະທຳແບບນີ້ບໍ່ເອີ້ນວ່າການທຳດີ. ການທຳດີທີ່ແທ້ຈິງນັ້ນແມ່ນການກະທຳທີ່ເຮັດອອກມາເອງ, ເຮັດອອກມາໂດຍທຳມະຊາດແລະດ້ວຍຫົວໃຈທີ່ຮັກພະເຈົ້າແລະຮັກເພື່ອນມະນຸດ. ມັນແມ່ນຄວາມສຳພັນຮັກກັບພະເຍຊູນັ້ນທີ່ຈູງໃຈຜູ້ຕິດຕາມພະອົງໃຫ້ເຮັດການດີ. ສະຫລຸບຄວາມໃນໜັງສືປັນຍາຈານ ກະສັດໂຊໂລໂມນໄດ້ຂຽນວ່າ: (ປັນຍາຈານ 12:13,14) "ຈົບເຣື່ອງແລ້ວ ໄດ້ຟັງກັນທັງຫມົດແລ້ວ (ສະຫລຸບເລື່ອງ) ຈົ່ງຢຳເກງພຣະເຈົ້າແລະຮັກສາພຣະບັນຍັດຂອງພຣະອົງ ເພາະນີ້ແຫລະເປັນຫນ້າທີ່ຂອງມະນຸດທັງປວງ ດ້ວຍວ່າພຣະເຈົ້າຈະຊົງເອົາການງານທຸກປະການເຂົ້າສູ່ການພິພາກສາ ພ້ອມດ້ວຍສິ່ງເລິກລັບທຸກຢ່າງ ບໍ່ວ່າດີຫລືຊົ່ວ"

ຄວາມສຳພັນຂອງມະນຸດກັບພະຄຣິດຈະຕ້ອງຖືກຕັດສິນຕາມການປະພຶດຂອງມະນຸດ, ເພາະສະ-ນັ້ນຈະຕ້ອງມີມາດຕະຖານອັນໃດອັນໜຶ່ງເປັນໂຕວັດແທນການປະພຶດນີ້. ໃນຂັ້ນຕອນການພິພາກ-ສາໃນໂລກ, ຈຸດປະສົງຂອງການໄປຂຶ້ນສານຄືເພື່ອທີ່ຈະຮູ້ວ່າຜູ້ຮ້າຍໄດ້ກະທຳຜິດແທ້ບໍ່ຫລືວ່າກົດ-ໝາຍໄດ້ຖືກຝ່າຝືນແທ້ບໍ່. ເມື່ອມີການຝ່າຝືນກົດເທົ່ານັ້ນມະນຸດຈຶ່ງຈະຖືກຈັບໄດ້ວ່າເຮັດຜິດ. ໃນການພິພາກສາຂອງພະເຈົ້າ ກໍມີກົດໝາຍແລະບໍ່ມີມາດຕະຖານ, ແລະຢາໂກໂບໄດ້ກ່າວແຈ້ງກ່ຽວກັບກົດໝາຍວ່າ (ຢາໂກໂບ 2:12) "ເຈົ້າທັງຫລາຍຈົ່ງເວົ້າແລະເຮັດ ເຫມືອນຢ່າງຄົນທີ່ຈວນຈະໄດ້ຮັບການພິພາກສາດ້ວຍກົດທີ່ໃຫ້ມີເສຣີພາບ"

ກ່ອນໜ້າຂໍ້ຄຳພີນີ້, ຢາໂກໂບໄດ້ກ່າວກ່ຽວກັບພະບັນຍັດ 2 ສອງຂໍ້. "ຢ່າລ່ວງປະເວນີ" ແລະ "ຢ່າຂ້າຄົນ" ແທ້ທີ່ຈິງແລ້ວ ພະບັນຍັດສິບປະການຂອງພະເຈົ້າແມ່ນກົດທີ່ຮ້ອງວ່າ "ກົດແຫ່ງເສລີ-ພາບ" ຊຶ່ງມະນຸດຈະຕ້ອງຖືກພິພາກສາຕາມກົດນີ້.

ການພິພາກສາຈະກຳນົດບົ່ງບອກວ່າເຮົາຈະຢູ່ຝ່າຍໃດຂອງການຕໍ່ສູ້ລະຫວ່າງພະຄຣິດແລະຊາຕານ. ພວກເຮົາຢູ່ຝ່າຍພະຄຣິດບໍ່? ພວກເຮົາໄດ້ອະນຸດໃຫ້ພະອົງດຳລົງໃນເຮົາບໍ່? ນ້ຳພະໄທຂອງພະເຈົ້າໄດ້ສະແດງອອກໃນພະບັນຍັດສິບປະການ ພວກເຮົາໄດ້ມອບໝົດຄວາມຮັກໃຫ້ພະອົງແລະນ້ຳພະໄທຂອງພະອົງແລ້ວຫລືບໍ່? ເຮົາປາດຖະໜາທີ່ຈະເຮັດຕາມນ້ຳພະໄທຂອງພະອົງດ້ວຍພະກຳລັງຂອງພະອົງບໍ່? ພະອົງໄດ້ຂຽນກົດຂອງພະອົງໃນໃຈຂອງເຮົາແລ້ວຫລືຍັງ?

ເມື່ອຄົນອົບພະຍົບຢາກຕັດສັນຊາດເປັນສັນຊາດອະເມລິກາ ພວກເຂົາຈະຕ້ອງໄດ້ສັນຍາວ່າພວກເຂົາຈະຈົງຮັກພັກດີຕໍ່ປະເທດອະເມລິກາແລະສັນຍາວ່າຈະເປັນຄົນທີ່ສັດຊື່ແລະຮັກສາກົດໝາຍ. ຄຣິສຕຽນກໍເຊັ່ນກັນ. ເມື່ອພວກເຂົາຮັບເອົາພະຄຣິດແລະປາດຖະໜາຈະເປັນປະຊາຊົນຂອງອາ-

ນາຈັກພະອົງ, ພະເຈົ້າຈະຂໍໃຫ້ເຂົາປະຕິຍານວ່າຈະຮັກແລະພັກດີຕໍ່ພະອົງແລະຮັກສາກົດຂອງພະອົງ

ຢ່າງໃດກໍຕາມ ບໍ່ແມ່ນຄົນອົບພະຍົບທຸກຄົນສັດຊື່ຕໍ່ຄຳປະຕິຍານຂອງເຂົາ ບາງຄົນເບິ່ງພາຍນອກແລ້ວເບິ່ງຄືວ່າເຂົາເປັນຄົນພັກດີຕໍ່ປະເທດ ແຕ່ຫລັງຈາກນັ້ນພວກເຂົາກໍຜິດຕໍ່ຄຳປະຕິຍານນັ້ນ ແລະເມື່ອເຂົາຖືກຈັບໄດ້ ການເປັນສັນຊາດຂອງເຂົານັ້ນກໍຖືກເພີກຖອນແລະພວກເຂົາຕ້ອງຖືກເນ-ລະເທດອອກປະເທດ. ຄ້າຍໆກັນ ບໍ່ແມ່ນຄຣິສຕຽນທຸກຄົນສັດຊື່ຕໍ່ຄຳປະຕິຍານຂອງຕົນ. ຍັງເວົ້າບໍ່ໄດ້ເທື່ອວ່າການທີ່ເຮົາເປັນຄົນຊອບທຳມາຮອດປະຈຸບັນນີ້ມັນພຽງພໍແລ້ວ ເຮົາຈະຕ້ອງເປັນຄົນຊອບທຳແລະສັດຊື່ຈົນກວ່າພະອົງຈະມາ. ມັນກໍຍັງບໍ່ພໍເທື່ອທີ່ເຮົາຈະເວົ້າອອກມາວ່າເຮົາເປັນຜູ້ຕິດຕາມພະຄຣິດ, ພວກເຮົາຕ້ອງອະນຸຍາດໃຫ້ຊີວິດແຫ່ງການສົມບູນແລະຄວາມສັດຊື່ຂອງພະຄຣິດອາໃສຢູ່ໃນເຮົາ

ພະເຍຊູໄດ້ກ່າວວ່າ (ມັດທາຍ 7:21) “ບໍ່ແມ່ນຫມົດທຸກຄົນທີ່ກ່າວແກ່ເຮົາວ່າ, ‘ພຣະອົງເຈົ້າ, ພຣະອົງເຈົ້າ,’ ຈະເຂົ້າໃນແຜ່ນດິນສວັນ ເຂົ້າໄດ້ແຕ່ຜູ້ທີ່ເຮັດຕາມນ້ຳພຣະທັຍພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນ”

ການຕໍ່ສູ້ລະຫວ່າງຄວາມດີແລະຄວາມຊົ່ວ, ແລະຫວ່າງພະຄຣິດແລະຊາຕານ ແມ່ນກ່ຽວກັບລັກ-ສະນະແຫ່ງຄວາມຮັກຂອງພະເຈົ້າ. ແລະກົດຂອງພະອົງແມ່ນຖືກຂຽນຂຶ້ນຕາມລັກສະນະນີ້. ໃນວັນພິພາກສາພະອົງກໍຍັງຄົງລັກສະນະນີ້.

ແຕ່ວ່າຄວາມຈິງທີ່ໜ້າຕົກໃຈທີ່ບໍ່ຄ່ອຍມີຄຣິສຕຽນຮູ້ນັ້ນກໍຄື ເວລານີ້ການພິພາກສາໃນສະຫວັນແມ່ນກຳລັງດຳເນີນໄປ. ຄວາມຈິງແລ້ວພະຄຳໄດ້ເປີດເຜີຍໃຫ້ເຮົາຮູ້ວ່າການພິພາກສາຕັດສິນແມ່ນໄດ້ເລີ່ມໃນປີ 1844. ດ້ວຍເຫດຜົນນີ້ ໃນໜັງສືພະນິມິດ ໂຢຮັນໄດ້ບອກເຕືອນແລະເຊີນກ່າວຄຳເຊີນວ່າ:

(ພະນິມິດ 14:6,7) “ແລ້ວຂ້າພະເຈົ້າໄດ້ເຫັນເທວະດາອີກຕົນນຶ່ງບິນໄປໃນທ້ອງຟ້າ ມີຂ່າວປະ-ເສີດອັນຕລອດໄປເປັນນິດເພື່ອນຳໄປປະກາດແກ່ຊາວໂລກທັງປວງ ທຸກປະເທດ ທຸກຕະກູນ ທຸກພາສາ ແລະທຸກຊາດ ເທວະດາຕົນນັ້ນໄດ້ຮ້ອງສຽງດັງຂຶ້ນວ່າ, ‘ຈົ່ງຢຳເກງພຣະເຈົ້າແລະຖວາຍພຣະກຽດແດ່ພຣະອົງ ເພາະເຖິງເວລາທີ່ພຣະອົງຈະຊົງພິພາກສາແລ້ວ ແລະຈົ່ງນະມັສການພຣະອົງຜູ້ຊົງສ້າງຟ້າສວັນ ແຜ່ນດິນໂລກ ນ້ຳທະເລ ກັບນ້ຳພຸທັງຫລາຍ’”

ພີ່ນ້ອງຈະສັງເກດເຫັນວ່າເທວະດາຕົນນັ້ນບໍ່ໄດ້ປະກາດວ່າ "ໃນອະນາຄົດພະເຈົ້າຈະພິພາກສາ" ແຕ່ເທວະດານັ້ນໄດ້ປະກາດວ່າ "ເຖິງເວລາທີ່ພະອົງຈະພິພາກສາແລ້ວ" ພະຄໍາພີພາສາອັງກິດໄດ້ກ່າວກ່ຽວກັບຂໍ້ນີ້ແຈ້ງກວ່າພາສາລາວເຮົາໜ້ອຍໜຶ່ງ ສະບັບພາສາອັງກິດໄດ້ກ່າວວ່າ "ເວລາທີ່ພະອົງພິພາກສາມາຮອດແລ້ວ"

ພາກສ່ວນທີສອງຂອງໜັງສືມ້ວນໄດ້ຮ້ອງດຶງເອົາປະຊາຊົນໃຫ້ອອກຈາກລະບົບສາດສາໜາທີ່ຜິດທີ່ຈະມາໃນຍຸກສຸດທ້າຍ. ພາກສ່ວນສຸດທ້າຍຂອງຂ່າວສານສຸດທ້າຍທີ່ມາເຖິງໂລກໄດ້ເຕືອນປະຊາ-ຊົນຂອງພະເຈົ້າໃຫ້ລະວັງວ່າພວກເຂົາຈະຫລົງໄປນະມັດສະການ(ພະລັງຂອງ)ສັດຮ້າຍທີ່ກ່າວໃນໜັງສືພະນິມິດ.

(ພະນິມິດ 14:9,10) "ຖ້າຜູ້ໃດບູຊາສັດຮ້າຍແລະຮູບຂອງມັນ ແລະຮັບເຄື່ອງຫມາຍນັ້ນໄວ້ທີ່ຫນ້າ-ຜາກຫລືທີ່ມື ຜູ້ນັ້ນແຫລະ, ຈະຕ້ອງດື່ມເຫລົ້າແວງແຫ່ງພຣະພິໂຣດຂອງພຣະເຈົ້າ"

ໃຫ້ເຮົາມາສັງເກດນໍາກັນໃນຂໍ້ທີ 14 ແລະ 15 ທີ່ເວົ້າກ່ຽວກັບການປະກາດຂອງທູດສະຫວັນສາມອົງ: (ພະນິມິດ 14:14:15) "ຂ້າພະເຈົ້າໄດ້ເບິ່ງ ແລະດັ່ງນີ້ ມີເມກຂາວ ແລະມີຜູ້ນຶ່ງປະທັບເທິງເມກນັ້ນເຫມືອນກັບບຸດມະນຸດ ພຣະສຽນສວມພວງມາລັຍຄໍາ ແລະພຣະຫັດຊົງຖືກ່ຽວດວງຄົມ ມີເທວະດາອີກຕົນນຶ່ງອອກມາຈາກພຣະວິຫານ ຮ້ອງສຽງດັງຂຶ້ນທູນພຣະອົງຜູ້ປະທັບເທິງເມກນັ້ນວ່າ, 'ຈົ່ງໃຊ້ກ່ຽວຂອງພຣະອົງກ່ຽວໄປເທີນ ເພາະເຖິງເວລາກ່ຽວແລ້ວ ດ້ວຍວ່າຜົນທີ່ຈະຕ້ອງເກັບກ່ຽວໃນແຜ່ນດິນໂລກກໍສຸກແລ້ວ'"

ຢາກໃຫ້ພີ່ນ້ອງລອງຄິດພິດຈາລະນາເບິ່ງເລື່ອງນີ້ດີໆນໍາກັນ. ພີ່ນ້ອງບາງຄົນອາດສົງໃສວ່າ ການພິພາພາກໃນສະຫວັນເລີ່ມຕົ້ນໃນປີ 1844 ໄດ້ແນວໃດ? ກຸນແຈສໍາຄັນແມ່ນພົບໃນຄໍາພະຍາກອນໃນໜັງສືດານີເອນ!

(ດານີເອນ 8:14) "ຍັງເຫິງເທົ່າກັບເວລາເຜົາບູຊາທັງເຊົ້າແລະແລງຜ່ານໄປໄດ້ສອງພັນສາມຮ້ອຍເທື່ອ(ວັນ) ແລ້ວພຣະວິຫານຈະຄືນສູ່ສະພາບເດີມ" ນີ້ແມ່ນຄໍາພະຍາກອນແຫ່ງເວລາທີ່ຍາວນານທີ່ສຸດໃນພະຄໍາພີ.

ໃນຄຳພະຍາກອນ ພວກເຮົາໄດ້ຮູ້ວ່າໜຶ່ງແມ່ນເທົ່າກັບໜຶ່ງປີ: (ເອເຊກຽນ 4:6) "ເຮົາກຳນົດໃຫ້ເຈົ້າສີ່ສິບວັນ **ວັນແທນປີ**"

2,300 ວັນນີ້ໄດ້ເລີ່ມຕົ້ນນັບຕັ້ງແຕ່ຕອນກະສັດ ອາເທັກເຊີຊີດສ໌ (Artaxerxes) ໄດ້ອອກຄຳສັ່ງໃຫ້ສ້າງກຸງເຢຣູຊາເລັມຄືນໃໝ່ແລະກູ້ຄືນເສດຖະກິດຂອງເມືອງນີ້. ປະຊາຊົນອິດສະລາເອນໄດ້ຖືກຈັບໄປເປັນທາດທີ່ກຸງບາບີໂລນເປັນເວລາ 70 ປີ ແລະພວກເຂົາໄດ້ຄອງຄອຍເວລາທີ່ຈະກັບຄືນບ້ານເພື່ອໄປສ້າງຄືນເມືອງທີ່ຮັກຂອງພວກເຂົາ. ໃນທີ່ສຸດ ໃນປີ 457 ປີ ກ່ອນ ຄ.ສ. ກະສັດກໍໄດ້ອອກຄຳສັ່ງທີ່ປະຊາຊົນອິດສະລາເອນຢາກໄດ້ຍິນມາຕັ້ງແຕ່ດົນນານ ນັ້ນຄືຄຳສັ່ງອະນຸຍາດໃຫ້ເຂົາກັບຄືນເຢຣູຊາເລັມໄດ້. 2,300 ປີຈາກມື້ນັ້ນແມ່ນມາຈົບທີ່ປີ 1844. ໃນປີນັ້ນສານໃນສະຫວັນໄດ້ເລີ່ມຕົ້ນການພິພາກສາ ແລະພະເຈົ້າກໍເລີ່ມ "ຕັດສິນໂລກ" ວັນພິພາກສາແຫ່ງປີ ຫລືວັນແຫ່ງການຊຳລະພະວິຫານຂອງພະເຈົ້າເພື່ອປະຊາຊົນຂອງພະອົງໄດ້ເລີ່ມຕົ້ນໃນວັນແຫ່ງການໄຖ່ໂທດ (day of Atonement)

ສານຂອງພະເຈົ້າໄດ້ເລີ່ມພິພາກສາມາໄດ້ຫລາຍກວ່າສັດຕະວັດແລ້ວ. ພີ່ນ້ອງອາດຈະຖາມວ່າ, "ວັນແຫ່ງການໄຖ່ໃນສະຫວັນມີຄວາມໝາຍວ່າແນວໃດ?" ໃນສະໄໝອິດສະລາເອນບູຮານ ປະຊາຊົນຈະເອົາຂອງມາຖະຫວາຍບູຊາທີ່ຫໍເຕັນສັກສິດ. ນະທີ່ນັ້ນພວກເຂົາໄດ້ສາລະພາບບາບຂອງເຂົາ ແລະຂ້າແກະເພື່ອສະແດງໃຫ້ເຫັນເຖິງຄວາມເຊື່ອສັດທາໃນການສິ້ນພະຊົນຂອງບຸດຂອງພະເຈົ້າຄືພະເຢຊູທີ່ຈະມາໃນພາຍໜ້າ,

100

ປະຈຸບັນນີ້, ຖ້າເຮົາເຮັດບາບ, ພວກເຮົາຂໍໃຫ້ພະເຈົ້າອະໄພບາບຂອງເຮົາເພາະວ່າພະເຢຊູໄດ້ສິ້ນພະຊົນແທນເຮົາເພາະຈ່າຍໜີ້ແຫ່ງຄວາມບາບຂອງເຮົາ. ຢ່າງໃດກໍຕາມ ຊ່ວງເວລາກ່ອນພະເຢຊູຖືກຕຶງທີ່ພູເຂົາຄາວາຣີ ພວກເຂົາບໍ່ສາມາດເບິ່ງຍ້ອນຫລັງເພື່ອໄປຫາຂອງຖະຫວາຍບູຊາອັນໃດ(ເພາະບໍ່ມີ) ໂດຍຄວາມເຊື່ອສັດທາຂອງພວກເຂົາ ພວກເຂົາຕ້ອງເບິ່ງໄປຂ້າງໜ້າ ເບິ່ງໄປຍັງເວລາທີ່ "ແກະ"ຂອງພະເຈົ້າຈະຕາຍເພື່ອເຂົາ. ໂດຍການຖະຫວາຍບູຊາສັດບໍ່ມີມົນທິນ, ພວກເຂົາໄດ້ສະແດງໃຫ້ເຫັນເຖິງຄວາມເຊື່ອໃນພະຜູ້ຊ່ອຍໃຫ້ລອດຜູ້ທີ່ຈະມາແລະຕາຍເພື່ອທີ່ຈະເຮັດໃຫ້ເຂົາສາມາດໄດ້ຮັບການໃຫ້ອະໄພ. ຫລັງຈາກນັ້ນຄວາມບາບຂອງພວກເຂົາກໍໄດ້ອອກຈາກໂຕເຂົາເຂົ້າໄປສູ່ຫໍເຕັນສັກສິດໂດຍການທີ່ປຸໂລຫິດໄດ້ພົມເລືອດຂອງສັດຕໍ່ໜ້າຜ້າມ່ານຂອງໜ້າບໍລິສຸດທີ່ສຸດຂອງຫໍເຕັນສັກສິດ.

ໃນແຕ່ລະປີຈະຕ້ອງໄດ້ມີມື້ໜຶ່ງທີ່ລູກຫລານຂອງປະຊາຊົນອິດສະລາເອນຈະຕ້ອງໄດ້ເຮັດພິທີສັກ-ສິດອັນນີ້ ເຂົາໄດ້ເອີກວັນນີ້ວ່າ “ວັນແຫ່ງການໄຖ່ໂທດ” (ຫລືວັນແຫ່ງການລົບລ້າງບາບ, ລົບລ້າງມົນທິນ) ແລະກໍເປັນວັນທີ່ປະຊາຊົນອິດສະລາເອນຖືວ່າເປັນວັນແຫ່ງການພິພາກສາ. ສິບວັນກ່ອນໜ້າວັນແຫ່ງການໄຖ່ໂທດ, ເຂົາຈະເປົ່າແກເພື່ອເຕືອນໃຫ້ປະຊາຊົນອິດສະລາເອນໃຫ້ຮູ້ວ່າມັນໄດ້ເຖິງເວລາແລ້ວທີ່ພວກເຂົາຕ້ອງກັບໃຈແລະສາລະພາບບາບຂອງເຂົາອອກມາ. ຄົນໃດທີ່ບໍ່ໄດ້ຮ່ວມພິທີນີ້ຈະຕ້ອງຖືກເນລະເທດອອກຈາກຄ້າຍ.

(ລະບຽບພວກເລວີ 16:30) “ເພາະວ່າໃນວັນນີ້ຈະກະທຳການລົບມົນທິນບາບຂອງເຈົ້າ ແລະຊຳ-ຮະເຈົ້າ ເຈົ້າຈະສະອາດຕໍ່ພຣະພັກພຣະຜູ້ເປັນເຈົ້າ ພົ້ນຈາກບາບທັງສິ້ນຂອງເຈົ້າ”

ໜັງສືເຮັບເຣີໄດ້ບອກແຈ້ງວ່າຫໍເຕັກສັກສິດແລະພິທີທີ່ເຮັດໃນຫໍເຕັນນັ້ນແມ່ນເປັນຕົວຢ່າງຂອງຫໍເຕັນໃນສະຫວັນບ່ອນທີ່ພະຄຣິດເປັນຜູ້ປຸໂລຫິດຂອງເຮົາໃຫ້ອະໄພບາບຂອງພວກເຮົາ.

ໂປໂລໄດ້ກ່າວວ່າ, (ເຮັບເຣີ 8:1,2) “...ຄືພວກເຮົາມີມະຫາປະໂຣຫິດຢ່າງນີ້ ຄືມະຫາປະໂຣຫິດຜູ້ປະທັບຢູ່ເບື້ອງຂວາພຣະທີ່ນັ່ງຂອງຜູ້ຊົງເດຊານຸພາບໃນມະຫາສວັນ ເປັນຜູ້ບົວລະບັດໃນສະຖານທີ່ສັກສິດ ຄືໃນສຳນັກຜ້າອັນແທ້ຈິງ ຊຶ່ງອົງພຣະຜູ້ເປັນເຈົ້າໄດ້ຊົງຕັ້ງໄວ້ ບໍ່ແມ່ນມະນຸດຕັ້ງ”

ອີກເທື່ອໜຶ່ງ: (ເຮັບເຣີ 9:11,12,24) “ສ່ວນພຣະຄຣິດ ໄດ້ສະເດັດມາເປັນມະຫາປະໂຣຫິດສຳ-ລັບສິ່ງປະເສີດຊຶ່ງມາເຖິງແລ້ວ ພຣະອົງກໍໄດ້ສະເດັດເຂົ້າໄປໃນສຳນັກອັນໃຫຍ່ແລະປະເສີດກວ່າແຕ່ກ່ອນ (ທີ່ບໍ່ໄດ້ສ້າງຂຶ້ນດ້ວຍມືມະນຸດ ຄືບໍ່ແມ່ນສິ່ງຂອງທີ່ສ້າງຂຶ້ນໃນໂລກນີ້) ພຣະອົງໄດ້ສະ-ເດັດເຂົ້າໄປໃນສະຖານທີ່ສັກສິດທີ່ສຸດພຽງເທື່ອດຽວເປັນການສິ້ນສຸດ ແລະພຣະອົງບໍ່ໄດ້ຊົງນຳເລືອດແບ້(ແກະ)ຫລືເລືອດລູກງົວເຂົ້າໄປ ແຕ່ຊົງນຳພຣະໂລຫິດຂອງພຣະອົງເອງເຂົ້າໄປ ແລະຊົງສຳເຣັດການໄຖ່ບາບອັນຕລອດໄປ ເພາະວ່າພຣະຄຣິດບໍ່ໄດ້ສະເດັດເຂົ້າໄປໃນສະຖານທີ່ສັກສິດຊຶ່ງສ້າງຂຶ້ນດ້ວຍມືມະນຸດຕາມແບບຢ່າງໃນສວັນ ແຕ່ດຽວນີ້ພຣະອົງໄດ້ສະເດັດເຂົ້າໄປໃນມະຫາສວັນ ເພື່ອເຂົ້າເຝົ້າພຣະເຈົ້າແທນເຮົາທັງຫລາຍ.”

ການສິ້ນພະຊົນຂອງພະຄຣິດທີ່ຄາວາຣີໄດ້ເປັນຂອງຖະຫວາຍບູຊາໄຖ່ບາບອັນແທ້ຈິງ.
(ເຮັບເຣີ 7:25) “... ພຣະອົງຈຶ່ງຊົງສາມາດເປັນນິດ ທີ່ຈະໂຜດເອົາຄົນທັງປວງທີ່ໄດ້ເຂົ້າມາຫາພຣະເຈົ້າໂດຍທາງພຣະອົງນັ້ນ ໃຫ້ໄດ້ຮັບຄວາມລອດພົ້ນ ເພາະວ່າພຣະອົງຊົງພຣະຊົນຢູ່ເປັນນິດເພື່ອຊ່ອຍທູນຂໍພຣະກະຣຸນາໃຫ້ຄົນເຫລົ່ານັ້ນ”

ໃນວັນພິພາກສາ ຄວາມສຳພັນແລະອຸປະນິໄສຂອງເຮົາທີ່ມີຕໍ່ພະຄຣິດຈະເປັນຕົວຕັດສິນອຸປະນິໄສຂອງພະອົງທີ່ມີຕໍ່ເຮົາ, ເພາະວ່າ ພະອົງໄດ້ຕັດວ່າ (ມັດທາຍ 10:32,33) "ດັ່ງນັ້ນທຸກຄົນທີ່ຈະຮັບເຮົາຕໍ່ຫນ້າມະນຸດ ຝ່າຍເຮົາຈະຮັບຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາ ຜູ້ຊົງສະຖິດຢູ່ໃນສວັນເຫມືອນກັນ ແຕ່ຜູ້ທີ່ປະຕິເສດເຮົາຕໍ່ຫນ້າມະນຸດ ຝ່າຍເຮົາກໍຈະປະຕິເສດຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນເຫມືອນກັນ"

ໃນວັນພິພາກສາພີ່ນ້ອງຈະບໍ່ຢືນຢູ່ຄົນດຽວ! ຖ້າເຮົາຮັບເອົາພະຄຣິດ ພະອົງກໍຈະຮັບເອົາເຮົາຕໍ່ໜ້າພະບິດາ. ຖ້າເຮົາເປັນຂອງພະຄຣິດ, ພະອົງຈະເປັນຜູ້ຊ່ອຍຂອງເຮົາ ແລະເຮົາຈະໄປຢືນຢູ່ຕໍ່ໜ້າສານຄືດັ່ງກັບວ່າເຮົາບໍ່ເຄີຍມີບາບ ແລະພວກເຮົາຈະໄດ້ຮັບການນັບຖືວ່າພວກເຮົາໄດ້ໃຊ້ຊີວິດທີ່ສົມບູນແບບໃນການເຊື່ອຟັງເໝືອນດັ່ງພະຄຣິດໄດ້ດຳລົງຊີວິດຂອງພະອົງໃນໂລກນີ້. ແລະບົດບັນທຶກຂອງເຮົາກໍຈະໂຊພຽງແຕ່ຊີວິດອັນເຕັມດ້ວຍຄວາມຮັກຂອງພະຜູ້ຊ່ອຍໃຫ້ລອດຂອງເຮົາ ພວກເຮົາໄດ້ຮັບເຄຣດິດຈາກການທີ່ພະອົງມີຊີວິດທີ່ສົມບູນແບບ.

ພີ່ນ້ອງທີ່ຮັກເມື່ອວັນພິພາກສາມາເຖິງເຮົາບໍ່ມີຫຍັງທີ່ຈະຕ້ອງຢ້ານຖ້າເຮົາຮັກແລະຕິດຕາມພະເຍຊູດ້ວຍສຸດຈິດສຸດໃຈຂອງເຮົາ. ເພາະພະເຍຊູຈະມອບຜົນດີທີ່ພະອົງໄດ້ສະຫລະໂລຫິດຂອງພະອົງໃຫ້ກັບຄົນທີ່ສາລະພາບບາບທຸກຢ່າງທີ່ເຂົາມີອອກມາ,

ໂຢຮັນໄດ້ຂຽນວ່າ: (1 ໂຢຮັນ 1:7) "...ພຣະໂລຫິດຂອງພຣະເຢຊູພຣະບຸດຂອງພຣະອົງ ກໍຊຳ-ຮະລ້າງເຮົາທັງຫລາຍຈາກຜິດບາບຫມົດສິ້ນ"

ວັນພິພາກສາແມ່ນວັນດີສຳລັບຄົນທີ່ຮັກແລະຮັບໃຊ້ພະເຈົ້າ. ປະຈຸບັນນີ້ພວກເຮົາກຳລັງດຳລົງຊີວິດຢູ່ໃນຍຸກສຸດທ້າຍຂອງໂລກ. ການພິພາກສາໄດ້ເລີ່ມຕົ້ນແລ້ວໃນປີ 1844. ຜູ້ທຳອິດທີ່ຖືກພິພາກ-ສາແມ່ນອາເບນ (Abel) ລາວເປັນຄົນຊອບທຳຄົນທຳອິດໃນໂລກທີ່ຕາຍ.

ໂປໂລໄດ້ຂຽນວ່າ: (1 ເປໂຕ 4:17) " ດ້ວຍວ່າເຖິງເວລາແລ້ວທີ່ການຊົງພິພາກສາຈະຕ້ອງເລີ້ມຕົ້ນທີ່ຄົວເຮືອນຂອງພຣະເຈົ້າ" ຈະເວົ້າອີກຢ່າງໜຶ່ງກໍຄື ການພິພາກສາແມ່ນເລີ່ມຕົ້ນທີ່ຄົນທີ່ໄດ້ປະພຶດດັ່ງຄົນຂອງພະເຈົ້າ. ຢາກໃຫ້ເຮົາຄິດພາບໃນໃຈເບິ່ງວ່າວັນທີ່ອາເບນຂຶ້ນສານນັ້ນເປັນແນວ-ໃດ! ນະທີ່ສານເມື່ອພະເຈົ້າໄດ້ເຫັນຊີວິດຂອງອາເບນແລະບົດບັນທຶກຂອງລາວວ່າລາວໄດ້ຮັບເຊື່ອໃນການຕາຍຂອງລູກແກະຂອງພະເຈົ້າ. ໜຶ່ງໃນເຫດການສຸດທ້າຍທີ່ໄດ້ບັນທຶກໃນພະຄຳພີກ່ຽວກັບ

ອາເບນແມ່ນເຫດການທີ່ລາວນຳແກະໄປຖະຫວາຍບູຊາຍເພື່ອໃຫ້ເຫັນເຖິງຄວາມເຊື່ອສັດທາໃນການສະເດັດມາຂອງພະຜູ້ໄຖ່. ຄຸນງາມຄວາມດີຂອງຊີວິດພະຄຣິດແມ່ນໄດ້ມີມາຍັງໂຕລາວ. ຄວາມບາບຂອງລາວເປັນຖືກປົກປ້ອງດ້ວຍໂລຫິດຂອງພະຄຣິດ. ພີ່ນ້ອງສາມາດແນ່ໃຈໄດ້ເລີຍວ່າພະເຍຊູຜູ້ເປັນທະນາຍຂອງອາເບນໄດ້ຍື່ນພະຫັດຂອງພະອົງທີ່ຕອກດ້ວຍຕະປູອອກມາແລ້ວກ່າວວ່າ: "ພະບິດາ ເລືອດຂອງຂ້າພະອົງໄດ້ຈ່າຍຄ່າຄວາມຜິດບາບຂອງອາເບນແລ້ວ." ແລະພີ່ນ້ອງຈະໄດ້ຍິນທູດສະຫວັນເປັນຈຳນວນນັບບໍ່ຖ້ວນຮ້ອງອອກມາວ່າ "ເກັບຊື່ຂອງອາເບນໄວ້ໃນໜັງສືແຫ່ງຊີວິດ!" ແລະຊື່ຂອງລາວກໍຍັງຢູ່ທີ່ນັ້ນ! ເໝືອນດັ່ງພະຄຣິດໄດ້ສັນຍາວ່າ (ພະນິມິດ 3:5) "ຜູ້ທີ່ມີຊັຍຊະນະ ຜູ້ນັ້ນຈະຫົ່ມເຄື່ອງຂາວແລະເຮົາຈະບໍ່ລຶບຊື່ຂອງຜູ້ນັ້ນອອກເສັຽຈາກທະບຽນແຫ່ງຊີ-ວິດຈັກເທື່ອ ແຕ່ເຮົາຈະຮັບຮອງຊື່ຜູ້ນັ້ນຕໍ່ພຣະພັກພຣະບິດາຂອງເຮົາ ແລະຕໍ່ຫນ້າຝູງເທວະດາຂອງພຣະອົງ"

ແລະບໍ່ຕ້ອງສົງໄສເລີຍ ຊື່ຂອງຢູດາກໍໄດ້ຖືກນຳໄປຂຶ້ນສານສະຫວັນເຊັ່ນກັນ ຢູດາກໍແມ່ນໜຶ່ງໃນບັນດາສາວົກຂອງພະຄຣິດ. ຊີວິດຂອງລາວກໍບໍ່ແມ່ນຊົ່ວໄປໝົດທຸກຢ່າງ ແຕ່ວ່າລາວບໍ່ໄດ້ເປັນດັ່ງຄຳປະຕິຍານຂອງລາວຫລືດັ່ງຕາມສິ່ງທີ່ລາວຄວນເປັນ. ລາວບໍ່ໄດ້ຮັກພະຄຣິດຢ່າງເຕັມທີ່!ໃນຕອນທີ່ລາວເຂົ້າມາຫາພະອົງ ຄວາມອ່ອນແອຂອງລາວໄດ້ເຮັດໃຫ້ລາວຂາຍພະເຍຊູດ້ວຍເງິນ 30 ຫລຽນເງິນ. ຫລັງຈາກນັ້ນລາວກໍມີຄວາມປວດລ້າວຫລາຍແລະລາວກໍໄດ້ແຂວນເຊືອກຕາຍ.

ພະເຍຊູຮັກຢູດາ ພະອົງຖ່ອມໂຕພະອົງໄປລ້າງເທົ້າອັນເປື້ອນເປິະຂອງຢູດາໃນຄືນແຫ່ງຄາບອາ-ຫານສຸດທ້າຍ (Last Supper) ພະເຍຊູຫວັງວ່າພະອົງຈະໄດ້ສຳຜັດຈິດໃຈອັນອວດໂຕຂອງລາວ. ພະອົງປະສົງຈະຢືນຢູ່ຂ້າງລາວໃນຖານະທະນາຍຂອງລາວໃນວັນພິພາກສາ ແຕ່ວ່າຢູດາກໍໄດ້ຫັນໜີຈາກພະອົງ. ພະເຍຊູກໍຄົງຈະເສຍພະໄທເມື່ອພະອົງເປີດເຫັນຊື່ຂອງຢູດາ. ຢູດາມີແຕ່ພຽງຄວາມຊອບທຳຂອງລາວເທົ່ານັ້ນໃນວັນພິພາກສາ (ລາວບໍ່ມີຄວາມຊອບທຳຂອງພະຄຣິດ) ແລະພະຄຳພີໄດ້ກ່າວກ່ຽວກັບສິ່ງນີ້ວ່າ (ເອຊາຢາ 64:6) "ຂ້າພຣະອົງທຸກຄົນໄດ້ກາຍເປັນເຫມືອນຄົນທີ່ບໍ່ສະ-ອາດ ແລະການກະທຳອັນຊອບທັມຂອງຂ້າພຣະອົງທັງສິ້ນເຫມືອນເສື້ອຜ້າທີ່ເປື້ອນເປິ .."

ມີພຽງແຕ່ຄົນທີ່ໃຫ້ພະຄຣິດເປັນໜຶ່ງໃນຊີວິດເທົ່ານັ້ນທີ່ສາມາດນຸ່ງເຄື່ອງແຫ່ງຄວາມຊອບທຳຂອງພະຄຣິດ. ຖ້າບໍ່ດັ່ງພວກເຂົາກໍບໍ່ສາມາດສະແດງໃຫ້ເຫັນວ່າພວກເຂົາຄືນເປັນບໍລິສຸດໃນວັນພິພາກ-ສາ. ເພາະສະນັ້ນຊື່ຂອງຢູດາໄດ້ຖືກລົບອອກຈາກໜັງສືແຫ່ງຊີວິດ.

ປະຈຸບັນນີ້ແມ່ນຍຸກສຸດທ້າຍແລ້ວ ເໝືອນກັບປະຊາຊົນອິດສະລາເອນ ພວກເຮົາຈໍາຕ້ອງໄດ້ກັບໃຈ ແລະສາລະພາບບາບທຸກຢ່າງທີ່ເຮົາມີອອກມາ. ພວກເຮົາຈໍາເປັນຕ້ອງມອບຈິດມອບໃຈໃຫ້ພະເຍຊູທຸກເວລາ ເພາະວ່ານີ້ເປັນທາງດຽວທີ່ເຮັດໃຫ້ເຮົາຕຽມຕົວພ້ອມສໍາລັບໝາຍຮ້ອງຂອງສານ. ອີກບໍ່ດົນເວລາແຫ່ງຄວາມກະລຸນາຈະໝົດໄປແລະກໍຈະມີຄໍາສັ່ງອອກມາວ່າ: (ພະນິມິດ 22:11) “ຝ່າຍຄົນອະທັມກໍໃຫ້ເຮັດການອະທັມຕໍ່ໄປ ຜູ້ທີ່ເປັນຄົນຊົ່ວຊ້າກໍໃຫ້ເຂົາຊົ່ວຊ້າຕໍ່ໄປ ຝ່າຍຄົນຊອບທັມກໍໃຫ້ເຮົາການຊອບທັມຕໍ່ໄປ ແລະຜູ້ທີ່ເປັນຄົນບໍຣິສຸດກໍໃຫ້ເຂົາເປັນບໍຣິສຸດຕໍ່ໄປ”

ຄວາມເມດຕາຂອງພະເຈົ້າທີ່ພະອົງລໍຖ້າໃຫ້ເຮົາຮັບເອົາຈະໝົດລົງໃນເວລານັ້ນ. ຄໍາເວົ້າອັນໜ້າໂສກເສົ້າທີ່ສຸດຈະອອກມາຈາກຄົນທີ່ບໍ່ໄດ້ຮັບຄວາມລອດ ຄືຄົນທີ່ບໍ່ຮັບເອົາພະຄຣິດໃຫ້ເປັນພະເຈົ້າ ແລະເປັນທະນາຍຂອງເຂົາ.

ພວກເຂົາຈະເວົ້າອອກມາວ່າ, (ເຢເຣມີຢາ 8:20) “ຣະດູກ່ຽວກໍຜ່ານໄປ ຣະດູແລ້ງກໍສິ້ນລົງແລ້ວ ແລະເຮົາທັງຫລາຍກໍບໍ່ລອດ” ຫລັງຈາກນັ້ນພະເຍຊູກໍລົງມາສູ່ໂລກ ດັ່ງພະຄໍາໄດ້ກ່າວວ່າ, (ພະນິມິດ 22:12) “ເບິ່ງແມ່, ເຮົາຈະມາໃນໄວໆນີ້ ເຮົາຈະເອົາບໍາເຫນັດຂອງເຮົາມານໍາ ເພື່ອຕອບແທນການປະຕິບັດຂອງທຸກຄົນ”

ພີ່ນ້ອງທີ່ຮັກ, ພະເຍຊູລໍຄອຍທີ່ຈະເປັນທະນາຍຂອງພີ່ນ້ອງໃນວັນພິພາກສາ! ພະອົງລໍຄອຍໃຫ້ເຮົາຮັບເອົາຂອງຖະຫວາຍບູຊາຂອງພະອົງທີ່ຄາວາຣີ. ພະອົງລໍຄອຍໃຫ້ເຮົາສາລະພາບບາບຂອງເຮົາຕໍ່ພະອົງເພື່ອວ່າພະອົງຈະສາມາດລົບລ້າງມັນ. ພະອົງລໍຄອຍທີ່ຈະຂຽນຊື່ຂອງພີ່ນ້ອງລົງໃນໜັງສືແຫ່ງຊີວິດ. ໂຢຮັນໄດ້ບອກພວກເຮົາວ່າບໍ່ມີໃຜຈະສາມາດເຂົ້າເມືອງບໍລິສຸດໄດ້ (ພະນິມິດ 21:27) “ມີແຕ່ຄົນທັງຫລາຍທີ່ມີຊື່ຈົດໄວ້ໃນທະບຽນຂອງພຣະເມສານ້ອຍເທົ່ານັ້ນຈິ່ງຈະເຂົ້າໄດ້”

ພີ່ນ້ອງຢາກໃຫ້ຊື່ຂອງພີ່ນ້ອງຖືກຂຽນໃນໜັງມືແຫ່ງຊີວິດບໍ່? ພີ່ນ້ອງຢາກໃຫ້ພະເຍຊູຢືນຢູ່ຂ້າງພີ່-ນ້ອງໃນວັນພິພາກສາບໍ່? ສິ່ງທີ່ເຮົາຈໍາເປັນຕ້ອງເຮັດກໍຄືມອບຫົວໃຈມອບທຸກສິ່ງທຸກຢ່າງໃຫ້ກັບພະເຍຊູ, ເຊີນພະອົງເຂົ້າມາສະຖິດໃນໃຈແລະໃນຊີວິດຂອງເຮົາ. ແລະຊີວິດຂອງເຮົາຈະໄດ້ຮັບຂອງດີບໍ່ພຽງແຕ່ໃນວັນພິພາກສາເທົ່ານັ້ນ ແຕ່ໃນທຸກໆວັນຂອງຊີວິດເຮົາດ້ວຍ

(ຄໍາເຊີນຊວນ)

ພີ່ນ້ອງຈະເປີດໃຈຕ້ອນຮັບພະເຢຊູນະວິນາທີນີ້ບໍ່? ພີ່ນ້ອງຈະຂໍໃຫ້ພະອົງເອົາສິ່ງຕ່າງໆທີ່ເຮັດໃຫ້ພີ່-ນ້ອງບໍ່ສາມາດເຂົ້າໄປໃນແຜ່ນດິນສະຫວັນອອກໄປຈາກພີ່ນ້ອງບໍ່? ໃນວັນພິພາກສາພະເຈົ້າຈະເປີດເຜີຍທຸກສິ່ງທຸກຢ່າງກ່ຽວກັບເຮົາ. ທຸກສິ່ງທຸກຢ່າງຈະຖືກເປີດເຜີຍອອກມາໃຫ້ຈັກກະວານຮູ້. ບາບຂອງເຮົາທຸກຢ່າງແມ່ນຖືກບັນທຶກ.

ພີ່ນ້ອງຢາກຈະໃຫ້ບາບຜິດຂອງພະນ້ອງຖືກຊຳລະລ້າງດ້ວຍໂລຫິດຂອງພະເຢຊູບໍ່? ພີ່ນ້ອງຢາກຈະໃຫ້ພະຄຣິດເຂົ້າມາໃນຊີວິດແລະກ່າວວ່າ, "ແມ່ນແລ້ວ ຄົນຜູ້ນີ້ແມ່ນເປັນຂອງເຮົາ...ເຮົາໄດ້ອະໄພບາບຂອງເຂົາ. ເຮົາໄດ້ຍົກເລີກໜີ້ຂອງເຂົາ. ເຮົາໄດ້ຍົກຜິດຄວາມຜິດບາບຂອງເຂົາ. ບາບຂອງເຂົາຖືກລ້າງດ້ວຍໂລຫິດຂອງເຮົາ. ໃຫ້ລຶບຊື່ເຂົາອອກຈາກໜັງສືຕະຫລອດໄປ." ພີ່ນ້ອງຈະມອບຊີວິດທັງໝົດໃຫ້ພະອົງບໍ່?

ຂໍໃຫ້ພີ່ນ້ອງຍົກມືຂຶ້ນແລ້ວອະທິຖານຕອບຮັບພະອົງ, "ແມ່ນແລ້ວພະເຈົ້າ ຂ້າພະອົງຂໍມອບຊີວິດໃຫ້ພະອົງ ຂ້າພະອົງຢາກຈະເປັນຂອງພະອົງ."